ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ່ 471/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ່ 30 MAY 2011

# ບົດລາຍງານປະຈຳໄຕມາດ I ປີ 2011
# ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

## I. ບົດນຳ

ບົດລາຍງານສະບັບນີ້ໄດ້ ສັງລວມໃຫ້ເຫັນຜົນການດຳເນີນງານ ຫລື ໝາກຜົນຂອງການດຳເນີນທຸລະກິດ ກໍຄືການຈັດຕັ້ງປະຕິບັດບັນດາຈຸດປະສົງລະດັບຄາດໝາຍທີ່ໄດ້ກຳນົດໄວ້ໃນແຜນງົບປະມານປະຈຳໄຕມາດ ທີ 1 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ນັບແຕ່ວັນທີ່ 1 ມັງກອນ ຈົນເຖິງວັນທີ່ 31 ມີນາ 2011. ນອກຈາກນີ້ຍັງໄດ້ສັງລວມໃຫ້ເຫັນບາງການວິເຄາະກ່ຽວກັບໝາກຜົນຂອງການດຳເນີນງານທີ່ຜ່ານມາ ແລະ ຄາດຄະເນຜົນປະກອບການທີ່ອາດຈະໄດ້ຮັບໃນອານາຄົດພ້ອມທັງທິດທາງໃນ ຕໍ່ໜ້າແນໃສ່ກ້າວຂຶ້ນເຮັດສຳເລັດບັນດາຈຸດປະສົງລະດັບຄາດໝາຍ ຂອງ ແຜນງົບ ປະມານປະຈຳປີຢ່າງສຳເລັດຜົນ.

## II. ຜົນການດຳເນີນງານຂອງບໍລິສັດ

### *ກ) ຂໍ້ມູນທາງການເງິນ ຂອງບໍລິສັດ (ບໍ່ທັນໄດ້ຮັບຮອງຈາກຜູ້ກວດສອບ ພາຍນອກ).*

1. ງົບດຸນ( Balance Sheet )

ຖະໜົນໜອງບອນ, ບ້ານຝາຍ, ຕູ້ ປ ນ 2392, ນະຄອນຫລວງວຽງຈັນ ສປປ ລາວ ໂທລະສັບ: (856-21) 454401
ແຟັກ: (856-21) 454 400. ອີເມລ: edlgenhq@edlgen.com.la, ເວັບໄຊ: www.edlgen.com.la

## 1.1 ໃບສະຫຼຸບຊັບສິນ ( Assets)

| ຊັບສິນ | ປີນີ້ອັດບັນຊີວັນທີ<br>31/03/2011<br>(ລ້ານກີບ) | ປີກ່ອນອັດບັນຊີວັນທີ<br>31/12/2010<br>(ລ້ານກີບ) |
|---|---|---|
| **ຊັບສິນ** | | |
| **ຊັບສິນບໍ່ໝູນວຽນ** | | |
| ຄ່າໃຊ້ຈ່າຍສ້າງຕັ້ງບໍລິສັດ | 2,382 | 2,382 |
| ຊັບສິນທີ່ຢູ່ພາຍໃຕ້ການສຳປະທານ, ສຸດທິ | 3,913,577 | 3,935,380 |
| ລວມຊັບສິນບໍ່ໝູນວຽນ | 3,915,959 | 3,937,763 |
| **ຊັບສິນໝູນວຽນ** | | |
| ເງິນສົດ ແລະ ທຽບເທົ່າເງິນສົດ | 789,113 | 884,782 |
| ເຄື່ອງໃນສາງ, ສຸດທິ | 3,388 | 4,625 |
| ໜີ້ຕ້ອງຮັບການຄ້າ | 182,068 | 37,229 |
| ໜີ້ຕ້ອງຮັບອື່ນໆ | 164,485 | 188,139 |
| ຊັບສິນໝູນວຽນອື່ນໆ | - | - |
| ລວມຊັບສິນໝູນວຽນ | 1,139,054 | 1,114,775 |
| | | |
| **ລວມຊັບສິນທັງໝົດ** | **5,055,014** | **5,052,537** |

## 1.2 ໃບສະຫຼຸບໜີ້ສິນ ແລະທຶນ (Liabilities and Equity )

| ໜີ້ສິນ ແລະ ທຶນ | ປີນີ້ອັດບັນຊີວັນທີ<br>31/03/2011<br>(ລ້ານກີບ) | ປີກ່ອນອັດບັນຊີວັນທີ<br>31/12/2010<br>(ລ້ານກີບ) |
|---|---|---|
| **ທຶນ** | | |
| **ທຶນຂອງຜູ້ຖືຮຸ້ນ** | | |
| ທຶນຈົດທະບຽນ | 3,474,388 | 2,605,792 |
| ສ່ວນເກີນມູນຄ່າຮຸ້ນ | 15,576 | - |
| ກຳໄລສະສົມ | 95,279 | 20,512 |
| **ລວມທຶນທັງໝົດ** | 3,585,243 | 2,626,304 |

| | | |
|---|---|---|
| **ໜີ້ສິນ** | | |
| **ໜີ້ສິນບໍ່ໝູນວຽນ** | | |
| ເງິນກູ້ຢືມໄລຍະຍາວ, ສຸດທິ | 1,302,588 | 1,302,588 |
| **ລວມໜີ້ສິນບໍ່ໝູນວຽນ** | 1,302,588 | 1,302,588 |
| | | |
| **ໜີ້ສິນໝູນວຽນ** | | |
| ສ່ວນໄລຍະສັ້ນຂອງເງິນກູ້ຢືມໄລຍະຍາວ | 129,005 | 197,742 |
| ໜີ້ສິນໝູນວຽນອື່ນໆ | 2,382 | 884,172 |
| ດອກເບ້ຍຄ້າງຈ່າຍ | 9,174 | 16,266 |
| ລາຍຈ່າຍຄ້າງຈ່າຍ | 1,670 | 5,207 |
| ໜີ້ຕ້ອງສົ່ງ | 24,952 | 20,258 |
| **ລວມໜີ້ສິນໝູນວຽນ** | 167,183 | 1,123,645 |
| | | |
| **ລວມໜີ້ສິນທັງໝົດ** | 1,469,771 | 2,426,233 |
| | | |
| **ລວມທຶນ ແລະ ໜີ້ສິນທັງໝົດ** | **5,055,014** | **5,052,537** |

## 1. ໃບລາຍງານຜົນໄດ້ຮັບ ( Incomes Statement )

| ລາຍການ | ເກີດຂື້ນໃນໄຕມາດ |
|---|---|
| ການຂາຍ | 158,732 |
| ຕົ້ນທຶນການຂາຍ | (64,248) |
| | |
| **ກຳໄລລວມ** | 94,484 |
| ລາຍຮັບອື່ນໆ | - |
| ຂາດທຶນຈາກອັດຕາແລກປ່ຽນ, ສຸດທິ | - |
| | |
| **ກຳໄລກ່ອນຄ່າໃຊ້ຈ່າຍ** | 94,484 |
| ຄ່າໃຊ້ຈ່າຍບໍລິຫານ | (21,166) |
| | |
| **ກຳໄລໃນການດຳເນີນງານ ກ່ອນຕົ້ນທຶນທາງການເງິນ ແລະ** | 73,319 |

| | |
|---|---|
| **ອາກອນ** | |
| ຕົ້ນທຶນທາງການເງິນ | (31) |
| | |
| **ກຳໄລກ່ອນຫັກອາກອນ** | 73,288 |
| ອາກອນກຳໄລ | - |
| | |
| **ກຳໄລສຸດທິທັງໝົດ** | **73,288** |

## *ຂ) ບາງວຽກງານພົ້ນເດັ່ນ ຂອງບໍລິສັດ*

ເນື່ອງຈາກບໍລິສັດຜະລິດໄຟຟ້າລາວມະຫາຊົນ ເປັນບໍລິສັດທີ່ກໍາຫາແຍກຕົວອອກຈາກລັດວິສາຫະກິດໄຟຟ້າລາວ ແລະ ໄດ້ຮັບການສ້າງຕັ້ງຂຶ້ນໃຫມ່ ໃນວັນທີ່ 15-12-2010 ທີ່ຜ່ານມານີ້ເອງ, ດັ່ງນັ້ນໃນໄຕມາດ 1 ທີ່ຜ່ານມານີ້ ທາງບໍລິສັດຈຶ່ງໄດ້ສຸມໃສ່ວຽກງານຕົ້ນຕໍ ແລະ ຮີບດ່ວນດັ່ງຕໍ່ໄປນີ້ :

(ກ) ຫັນປ່ຽນແລະ ປັບປຸງຄືນ ລະບົບການຄຸ້ມຄອງບໍລິຫານ ຂອງ ບໍລິສັດໃຫ້ສອດຄ່ອງກັບມາດຕະຖານຄວາມຮຽກຮ້ອງຕ້ອງການ ຂອງ ບໍລິສັດມະຫາຊົນ ຢ່າງຫນັກແໜ້ນ ແນໃສ່ດໍາເນີນການເຄື່ອນໄຫວທຸລະກິດໃຫ້ມີຜົນກໍາໄລ ແລະ ມີຜົນຕອບແທນອັນສົມເຫດສົມຜົນໃຫ້ແກ່ຜູ້ຖືຮຸ້ນກໍຄືນັກລົງທຶນທີ່ເປັນເຈົ້າຂອງບໍລິສັດ.

(ຂ) ຕັ້ງຫນ້າດໍາເນີນການຜະລິດຢ່າງມີປະສິດທິຜົນ ແລະ ຕໍ່ເນື່ອງ ຮັບປະກັນການຕອບສະຫນອງ ພະລັງງານໄຟຟ້າໃຫ້ ແກ່ ລັດວິສາຫະກິດໄຟຟ້າລາວ ຕາມສັນຍາຊື້ ຂາຍໄຟຟ້າສະບັບຫຍໍ້ລົງວັນທີ່ 15-12-2010 ລະຫວ່າງ ລັດວິສາຫະກິດໄຟຟ້າລາວ ແລະ ບໍລິສັດ ຜະລິດ ໄຟຟ້າລາວ ມະຫາຊົນ .

(ຄ) ກໍານົດທິດທາງແຜນຍຸດທະສາດໃນການຂະຫຍາຍທຸລະກິດ ຂອງ ບໍລິສັດໃຫ້ເປັນໄປໃນທິດທາງຕາມທີ່ໄດ້ກໍານົດໄວ້ໃນຫນັງສືຊວນຊື້( Prospectus) ໃນເວລາຂາຍຮຸ້ນແກ່ມວນຊົນຄັ້ງທໍາອິດ.

(ງ) ກະກຽມທຸກເງື່ອນໄຂເພື່ອເຮັດສໍາເລັດ ສັນຍາຊື້ຂາຍໄຟຟ້າ ແລະ ສັນຍາສໍາປະທານໃຫ້ທັງ 7 ເຂື່ອນ ໃຫ້ສໍາເລັດເປັນສັນຍາສະບັບສົມບູນພາຍໃນທ້າຍປີນີ້.

ຜ່ານການເອົາໃຈໃສ່ຈັດຕັ້ງປະຕິບັດບັນດາວຽກງານຕົ້ນຕໍທີ່ກ່າວມາຂ້າງເທິງນັ້ນ, ບໍລິສັດໄດ້ມີ ຫມາກຜົນດັ່ງຕໍ່ໄປນີ້ :

1) ໄດ້ສຳເລັດການປັບປຸງໂຄງຮ່າງການຈັດຕັ້ງພາຍໃນອົງກອນ, ຄັດເລືອກ , ສຳພາດ ແລະ ປະກອບພະນັກງານໃຫມ່ຈຳນວນຫນຶ່ງເຂົ້າໃນບັນດາຕຳແຫນ່ງງານຕ່າງໆ ຕາມຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງ ວຽກງານ. ຄຽງຄູ່ກັນນັ້ນກໍໄດ້ຍົກສູງລະດັບຄວາມຮູ້ຄວາມສາມາດຂອງ ພະນັກງານ ດ້ວຍການສົ່ງພະນັກງານຫລັກແຫລ່ງຈຳນວນຫນຶ່ງເຂົ້າຮ່ວມໃນການຝຶກອົບຮົມສຳມະນາຕ່າງໆທັງພາຍໃນແລະ ຕ່າງປະເທດ . ນອກຈາກນີ້ກໍຍັງໄດ້ໄປທັດສະນະສຶກສາຖອດຖອນບົດຮຽນນຳບໍລິສັດຜະລິດໄຟຟ້າທີ່ມີລັກສະນະການດຳເນີນທຸລະກິດທີ່ຄ້າຍຄືກັນທັງພາຍໃນ ແລະ ຕ່າງ ປະເທດ.

2) ໄດ້ສຳເລັດການສ້າງຕັ້ງບັນດາຄະນະກຳມະການຕ່າງໆທີ່ຈຳເປັນເຊັ່ນ: ຄະນະກຳມະການ ຈັດຊື້-ຈັດຈ້າງ , ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້-ຂາຍໄຟຟ້າ . ນອກຈາກນີ້ກໍໄດ້ຕັ້ງຫນ້າປັບປຸງບັນດາລະບຽບການ ແລະ ນະໂຍບາຍຕ່າງໆ ກ່ຽວກັບ ການຄຸ້ມຄອງ ພະນັກງານ , ຊັບສິນ ແລະ ການເງິນ ສຳເລັດໂດຍພື້ນຖານ.

3) ໄດ້ຜະລິດກະແສໄຟຟ້າໄດ້ຕາມແຜນການ ແລະ ໄດ້ຕັ້ງຫນ້າປະຕິບັດໃຫ້ສອດຄ່ອງກັບສັນຍາຊື້- ຂາຍໄຟຟ້າລະຫວ່າງ ຜ-ຟຟລ ແລະ ຟຟລ ທັງນີ້ກໍເພື່ອຮັບປະກັນຕົວເລກລາຍຮັບດັ່ງທີ່ກຳນົດໄວ້ໃນແຜນງົບປະມານປະຈຳປີ .

4) ໄດ້ຄຸ້ມຄອງງົບປະມານລາຍຈ່າຍໃຫ້ຕ່ຳກວ່າແຜນການທີ່ກຳນົດໄວ້ດ້ວຍການເອົາໃຈໃສ່ຕິດ ຕາມກວດກາຢ່າງໃກ້ສິດ .

5) ໄດ້ສູ້ຊົນສ້ອມແປງບຳລຸງຮັກສາເຂື່ອນຕ່າງໆຕາມຄາດຫມາຍແນໃສ່ໃຫ້ເຄື່ອງຈັກສາມາດນຳໃຊ້ຊັບພະຍາກອນນ້ຳເພື່ອຜະລິດໄຟຟ້າຢ່າງມີປະສິດທິຜົນ .

6) ໄດ້ສຳເລັດການສ້າງ ແບບຈຳລອງທາງການເງິນ ຂອງ ບໍລິສັດ (EDL-GEN Financial Model) ແລະສຳເລັດການກະກຽມແຜນການຂະຫຍາຍທຸລະກິດ ດ້ວຍການລົງທຶນໃສ່ ໃນບັນດາ ໂຄງການເຂື່ອນໄຟຟ້າ ຕ່າງໆທີ່ ຟຟລ ກຳລັງຖືຮຸ້ນຢູ່ ຫລືທີ່ກຳລັງກໍ່ສ້າງຢູ່ໃນປະຈຸບັນ .

7) ໄດ້ເລີ້ມຮ່າງ ສັນຍາຊື້-ຂາຍໄຟຟ້າ ແນໃສ່ໃຫ້ກາຍເປັນສັນຍາສະບັບສົມບູນສຳເລັດຕາມຂໍ້ຕົກລົງ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຮັບຮອງ ແລະ ຢັ້ງຢືນບັນ ຫາ

ສະເພາະທີ່ຕິດພັນກັບການສ້າງຕັ້ງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ສະບັບ ເລກທີ 180/ນຍ, ລົງວັນທີ 13/12/2010.

8) ໄດ້ສຳເລັດການອອກແບບກໍ່ສ້າງເວັບໄຊ ( Website ) ຊຶ່ງຄາດວ່າຈະປັບປຸງໃຫ້ສຳເລັດແລະອອກເຜີຍແຜ່ໄດ້ ໃນໄລຍະກາງໄຕມາດທີ່ 2 . ຊື່ ຂອງ ເວັບໄຊ ຂອງ ບໍລິສັດ ແມ່ນ www.edlgen.com.la

## I. ການຕີລາຄາ ແລະ ວິເຄາະ ຜົນການດຳເນີນງານ

ໂດຍລວມແລ້ວ, ໃນໄຕມາດທີ່ 1 ບໍລິສັດ ກໍມີຜົນປະກອບການທີ່ດີພໍສົມຄວນຊຶ່ງກໍເປັນພື້ນຖານອັນໜັກແໜ້ນ ໃຫ້ແກ່ ການປະຕິບັດແຜນໄຕມາດ ທີ່ 2 ແລະ ຕໍ່ໆໄປ ຊຶ່ງຄາດວ່າຈະສາມາດບັນລຸຕົວເລກຄາດໝາຍທີ່ກຳນົດໄວ້ໃນແຜນການປີ . ຕົວເລກຜົນປະກອບການ ຂອງ ແຕ່ລະໄຕມາດຈະມີຄວາມແຕກຕ່າງກັນຕາມລະດູການທັ້ງນີ້ກໍເພາະວ່າປັດໃຈສຳຄັນໃນການຜະລິດ ຂອງ ບໍລິສັດຜະລິດ-ໄຟຟ້າລາວມະຫາຊົນ ກໍຄື ປະລິມານນ້ຳທີ່ໄຫລເຂົ້າອ່າງເກັບນ້ຳຂອງແຕ່ລະເຂື່ອນນັ້ນເອງ . ໃນລະດູຝົນການຜະລິດຈະສູງຂຶ້ນຕາມປະລິມານນ້ຳຝົນທີ່ເຂື່ອນສາມາດກັກເກັບໄດ້ ແລະ ບັນດາໜ່ວຍຈັກຕ່າງໆກໍຈະສາມາດເດີນເຄື່ອງໄດ້ຢ່າງເຕັມກຳລັງ.

ດັ່ງນັ້ນ, ອີງໃສ່ຈຸດພິເສດຂອງການຜະລິດໄຟຟ້າໂດຍພະລັງງານນ້ຳ ( Hydropower ) , ການຈະເອົາຕົວເລກພຽງແຕ່ໄຕມາດໜຶ່ງໄຕມາດດຽວມາວິເຄາະສະຖານການຜະລິດໝົດປີ ຂອງ ບໍລິສັດ ນັ້ນຍ່ອມອາດຈະເກີດຄວາມຜິດພາດໄດ້ . ການວິເຄາະພາຍຫລັງໄຕມາດ 3 ( ລະດູຝົນ )ເປັນຕົ້ນໄປຈຶ່ງຂ້ອນຂ້າງຈະມີຄວາມແນ່ນອນສູງໃນການຕີລາຄາຜົນປະກອບການໝົດທັງປີ ຂອງ ບໍລິສັດ .

ອີງຕາມປະສົບການຜ່ານມາ ບໍລິສັດ ຕີລາຄາວ່າ ບໍລິສັດຈະສາມາດບັນລຸຕົວເລກລາຍຮັບຕາມແຜນການ ແລະ ບໍລິສັດຈະສາມາດຈ່າຍເງິນປັນຜົນໃຫ້ບັນດາຜູ້ຖືຮຸ້ນໄດ້ຕາມນະໂຍບາຍເງິນປັນຜົນ ( Dividend Payout Policy) ຂອງບໍລິສັດ ຄື ຈ່າຍເງິນປັນຜົນບໍ່ໃຫ້ຫລຸດ 50% ຫລື ສູງກວ່າ 50% ຂອງກຳໄລສຸດທິຂອງບໍລິສັດຊຶ່ງຂຶ້ນຢູ່ກັບມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນທັງໝົດ .

## IV. ທິດທາງໃນຕໍ່ໜ້າ

ແຜນການໃນຕໍ່ໜ້າ, ໂດຍສະເພາະໃນໄຕມາດ 2/2011, ບໍລິສັດຈະເລັ່ງໃສ່:

- ການຄຸ້ມຄອງການຜະລິດກະແສໄຟຟ້າ ໃຫ້ໄດ້ຕາມຄາດໝາຍ, ໂດຍສະເພາະຕາມສັນຍາຊື້ຂາຍໄຟຟ້າ ທີ່ເຊັນກັນໄວ້ ກັບ ຟຟລ.
- ການຄຸ້ມຄອງລາຍຈ່າຍງົບປະມານໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້ຢ່າງມີປະສິດທິຜົນ.
- ເອົາໃຈໃສ່ການສ້ອມແປງເຂື່ອນຕ່າງໆໃຫ້ສຳເລັດກ່ອນລະດູຝົນເຊັ່ນ: ການສ້ອມແປງເຄື່ອງຈັກເບີ 1, 2 ແລະ 3 ເຂື່ອນແຊລະບຳ, ການສ້ອມແປງໃຫຍ່ເຄື່ອງຈັກເບີ 3 ຂອງ ເຂື່ອນໄຟຟ້ານ້ຳງື່ມ-1 ແລະ ການສ້ອມແປງເຄື່ອງຈັກເບີ 2 ຂອງເຂື່ອນໄຟຟ້າເຊເສັດ 2.

- ສືບຕໍ່ການປັບປຸງສັນຍາຊື້ຂາຍໄຟຟ້າກັບ ຟຟລ ໃຫ້ສຳເລັດ ສົມບູນພາຍໃນໄຕມາດ 2 .

- ດຳເນີນການສຶກສາຄວາມເປັນໄປໄດ້ໃນການລົງທຶນຊື້ ເອົາຮຸ້ນຟຟລ ຊຶ່ງເປັນຮຸ້ນ ທີ່ ຟຟລ ຖືຢູ່ໃນບັນດາໂຄງການຜູ້ຜະລິດໄຟຟ້າເອກະລາດ ( Independent Power Producers : IPPs) ເຊັ່ນ ໂຄງການເຂື່ອນໄຟຟ້າເທີນຫີນບູນ, ເຂື່ອນໄຟຟ້າຫ້ວຍເຫາະ, ເຂື່ອນໄຟຟ້າ ນ້ຳລີກ 1-2 ແລະ ເຂື່ອນໄຟຟ້ານ້ຳງື່ມ 2 ແລະ ລົງທຶນຮັບໂອນ ບັນດາໂຄງການ ທີ່ ຟຟລ ກຳລັງກໍ່ສ້າງຢູ່ເຊັ່ນ: ໂຄງການເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່, ໂຄງການເຂື່ອນໄຟຟ້ານ້ຳຄານ 2 ຈາກ ຟຟລ.

ຮັບຮອງໂດຍ : 1. ຜູ້ອຳນວຍການໃຫຍ່ ______________________

ສີສະຫວາດ ທິຣະວົງ

2. ປະທານຄະນະກຳມະການກວດສອບພາຍໃນ ______________________

ບຸນສະຫຼອງ ສຸດທິດາຣາ